# ຈະເກີດຫຍັງຂຶ້ນ ກັບລູກຫຼານຂອງທ່ານ' ໃນການກວດເຊັກສຸຂະພາບ?



## ຜູ້ໃຫ້ບໍລິການຂອງລູກທ່ານ'ຈະ ທໍາການກວດດັ່ງຕໍ່ໄປນີ້:

- ກວດເຊັກຮ່າງກາຍ
- ຊັກຖາມກ່ຽວກັບປະຫວັດດ້ານສຸຂະພາບຂອງຄອບຄົວຂອງທ່ານ
- ໃຫ້ການສັກຢາຕາມການແນະນໍາ, ເມື່ອເຫັນວ່າມີຄວາມຈໍາເປັນ
- ປຶກສາກ່ຽວກັບສຸຂະພາບດ້ານທັນຕະກໍາແລະ, ເມື່ອເຫັນວ່າມີຄວາມຈໍາເປັນ, ໃຫ້ລູກຂອງທ່ານໃຊ້ສານຟລູໄລ ແລະ ສານເສີມຟລູໄລ, ແລະ ຊ່ວຍຄົ້ນຫາທ່ານຫມໍປົວແຂ້ວ.
- ກວດເຊັກການໄດ້ຍິນ ແລະ ສາຍຕາຂອງລູກຫຼານຂອງທ່ານ
- ປຶກສາຫົວຂໍ້ດ້ານສຸຂະພາບທີ່ສໍາຄັນເຊັ່ນ: ການພັດທະນາ, ພຶດຕິກໍາ, ສຸຂະພາບຈິດຂອງທ່ານແລະ ລູກຫຼານຂອງທ່ານ, ໂພຊະນາການ, ການນອນ, ຄວາມປອດໄພ, ແລະ ການປົກປ້ອງຜິວຫນັງຈາກແສງແດດ.

## ຜູ້ໃຫ້ບໍລິການ'ຈະທໍາການກວດເຊັກລູກຫຼານຂອງທ່ານ:

- **ການພັດທະນາການໃນໄລຍະຍາວ**
- **ສານຜິດຕົກຄ້າງ**
- **ນໍ້າປັດສະວະ,** ຖ້າຫາກມີຄວາມສ່ຽງ
- **ເປັນຄົນພິການສະໝອງ**
- **ກວດໂລກຊຶມເສົ້າ** ໃນແມ່ມືໃໝ່
- **ເກີດຄວາມກັງວົນ**
- **ກວດພະຍາດອັບເສບປອດ (TB),** ເຖ້າຫາກມີຄວາມສ່ຽງ
- **ລະດັບໄຂມັນ,** ຖ້າຫາກມີຄວາມສ່ຽງ
- **ບັນຫາດ້ານສຸຂະພາບຕ່າງໆ** ຫຼື ຄວາມກັງວົຍໃຈທີ່ທ່ານມີ

*Laotian 2026: For children from birth to under age 12*

# ຖ້າຫາກທ່ານມີຄໍາຖາມ ຫຼື ຢາກສຶກສາເພີ່ມເຕີມ

**ແຜນດູແລ້ດ້ານສຸຂພາບທີ່ໄດ້ຮັບການຄຸ້ມຄອງຂອງມະໂຍບາຍ Medi-Cal ຂອງທ່ານ**

ເບີໂທລະສັບຈະຕິດຢູ່ກັບບັດປະຈໍາຕົວປະຈໍາຂອງແຜນມະໂຍບາຍຂອງທ່ານ ແລະ ເວັບໄຊທ໌ຂອງແຜນຂອງທ່ານ ຫຼືໄປຍັງ www.dhcs.ca.gov/mmchpd

**ສາຍຕົງເພື່ອຂໍຄວາມຊ່ວຍເຫຼືອສະມາຊິກ Medi-Cal**

ໂທຫາເບີ **1-800-541-5555** (TDD 1-800-430-7077)
ຫຼືເຂົ້າໄປຍັງ www.dhcs.ca.gov/myMedi-Cal

## Medi-Cal Dental

ໂທຫາເບີ, ໃນລັດ ຄາລີຟໍເນຍ **1-800-322-6384** (TTY 1-800-735-2922)
ຫຼືໄປຍັງ smilecalifornia.org ຫຼື www.dhcs.ca.gov/MCP

**ຊ່ຽວຊານດ້ານສຸຂະພາບຈິດ**

ໂທຫາ **1-888-452-8609**
ເພື່ອສອບຖາມກ່ຽວກັບການບໍລິການສະເພາະກໍລະນີສຸຂະພາບຈິດໃນຂັ້ນຮ້າຍແຮງ, ຕິດຕໍ່ຄະນະຄຸ້ມຄອງແຜນມະໂຍບາຍດ້ານສະະພາບຈິດໄດ້ທີ www.dhcs.ca.gov/CMHP

**ຜູ້ຕິດເຫຼົ້າ ຫຼື ໃຊ້ສານເສບຕິດ**

ໂທຫາກົມບໍລິການດ້ານການດູແລສຸຂະພາບ (DHCS) ສູນຊັບພະຍາກອນການນໍາໃຊ້ສານເຄມີ 24/7 ທີເບີ**1-800-879-2772**
ຫຼື ໄປຍັງ www.dhcs.ca.gov/SUD-NETRL

**ການຊ່ວຍເຫຼືອໃນຍາມວິກິດ**

ໂທຫາ ສາຍດ່ວນຮັບມືການຂ້າຕົວຕາຍ ແລະ ວິກິດ ທີ່ **988**

**ການໃຫ້ຄໍາປຶກສາ/ການສະໜັບສະໜູນການຝຶກສອນດ້ານສຸຂະພາບຈິດ**

ໂທ ຫຼື ສົ່ງຂໍ້ຄວາມຫາ **1-833-317-HOPE** (4673) ຫຼື ໄປທີ່ www.calhope.org

**ຮູ້ສິດ ແລະ ຄວາມຮັບຜິດຊອບຂອງທ່ານ**

ໂທເບີ **1-888-452-8609**

DHCS
www.dhcs.ca.gov/kidsandteens



# Medi-Cal for Kids & Teens

## ຈະມີການບໍລິການ ໃນການປ້ອງກັນ ແລະ ປິ່ນປົວລູກຫຼານຂອງທ່ານແຕ່ເກີດຈົນຮອດອາຍຸ 21 ປີ



# ມະໂຍບາຍ Medi-Cal ຈະບໍລິການ <u>ໂດຍບໍ່ເສຍຄ່າ</u> ແກ່ລູກຫຼານ



## ການດູແລທັງໝົດທີ່ລູກຂອງທ່ານຕ້ອງການແມ່ນຈະບໍ່ມີການເສຍຄ່າ

ຖ້າຫາກລູກຫຼານຂອງທ່ານໄດ້ລົງທະບຽນຢູ່ໃນ Medi-Cal, ເຂົາເຈົ້າມີສິດທີ່ຈະໄດ້ຮັບການບໍລິການຟຣີ ແລະ ການຊ່ວຍເຫຼືອທີ່ເຂົາເຈົ້າຕ້ອງການ ຫຼື ມີສຸຂະພາບທີ່ດີຕັ້ງແຕ່ເກີດຈົນຮອດອາຍຸ 21 ປີ.

ນີ້ລວມເຖິງການກວດເຊັກ, ການສັກຢາ, ການກວດສຸຂະພາບ, ແລະ ການປິ່ນປົວສໍາລັບບັນຫາສຸຂະພາບທາງດ້ານຮ່າງກາຍ, ຈິດໃຈ, ແລະ ແຂ້ວ.

## ອ່ານເພື່ອກວດເຊັກຕາມຕາລາງເວລດັ່ງລຸ່ມນີ້

ເຊິ່ງເປັນສິ່ງສໍາຄັນທີ່ຈະພາລູກຫຼານຂອງທ່ານໄປກວດເຊັກສຸຂະພາບເປັນປະຈໍາເຖິງແມ່ນວ່າພວກເຂົາຈະຍັງບໍ່ເຈັບປ່ວຍ. ການກວດເຊັກສຸຂະພາບເປັນປົກກະຕິຈະສາມາດຊ່ວຍໃຫ້ລູກຂອງທ່ານມີສຸຂະພາບທີ່ດີ. ພວກເຂົາຍັງສາມາດປ້ອງກັນບັນຫາສຸຂະພາບ, ແລະ ຊອກຫາຊ່ອງງາງ ແລະ ແກ້ໄຂໄດ້ໄວ.

ທ່ານສາມາດນັດໝາຍເວລາໃດກໍໄດ້ເພື່ອປຶກສາກັບທ່ານຫມໍ, ເຖິງແມ່ນວ່າລູກຂອງທ່ານຫາກໍ່ໄດ້ຮັບການກວດເຊັກ. ອ່ານຕາຕະລາງເວລາຂອງການກວດເຊັກດັ່ງຂ້າງລຸ່ມນີ້.

# ທ່ານສາມາດບໍລິການຂົນສົ່ງ <u>ໂດຍບໍ່ເສຍ</u> ໃນເວລາໄປພົບແພດໝໍ



### ແຜນມະໂບາຍ'ກວດເຊັກລູກຫຼານຂອງທ່ານ

ໂທຫາແຜນມະໂຍບາຍດູແລທີ່ໄດ້ຮັບການຄຸ້ມຄອງຂອງທ່ານ. ຫຼື ໂທຫາສາຍດ່ວນສໍາລັບຊ່ວຍເຫຼືອສາມະຊິກຂອງມະໂຍບາຍ Medi-Cal **1-800-541-5555** (TDD 1-800-430-7077).

ທ່ານສາມາດໄດ້ຮັບການຊ່ວຍເຫຼືອດັ່ງຕໍ່ໄປນີ້:

- **ຄົ້ນຫາທ່ານໝໍ** ຫຼື ນັດໝາຍ
- **ຂີ່ລົດໄປມາໂດຍບໍ່ເສຍຄ່າ** ໃນການໄປກັບຈາກການນັດພົບຂອງທ່ານ ຫຼື ໄປຮັບຢາ, ອຸປະກອນກາແພດ, ແລະ ການເກື້ອກຸນຕ່າງໆ
- **ສະເໜີຂອງການຊ່ວຍເຫຼືອດ້ານພາສາ** ໃນເວລາໄປພົບໝໍ
- **ສະເໜີຂໍການບໍລິການແປພາສາ**

ຖ້າຫາກທ່ານຕ້ອງການໃບປົວດັ່ງກ່າວນີ້ ຫຼື ເອກະສານອື່ນໆຂອງມະໂຍບາຍ Medi-Cal ໃນ**ເລືອກຟໍແມັດ** ເຊັ່ນຟອນໃຫ່ຍ, ຟໍແມັດສຽງ, CD, ຫຼື ໜັງສືສໍາລັບຄົນພິການ, ຈົ່ງໂທຫາເບີ **1-833-284-0040.**

## ຕາລາງນັດໝາຍກວດເຊັກ ຫຼື ກ່ອນເກນອາຍຸເຫຼົ່ານີ້




# ມະໂຍບາຍ Medi-Cal ສໍາລັບເດັກນ້ອຍ ແລະ ໄວລຸ້ນຈະກວມເອົາການບໍລິການເພື່ອຈັດການ ແລະ ປິ່ນປົວບັນຫາສຸຂະພາບ

**ຖ້າທ່ານຫມໍພົບວ່າສຸຂະພາບທາງດ້ານຮ່າງກາຍ, ຈິດໃຈ, ຫຼື ແຂ້ວ ຄວາມກັງວົນໃຈທີ່ຕ້ອງການໃນການປິ່ນປົວ ຫຼື ການຄຸ້ມຄອງ,ມະໂຍບາຍ Medi-Cal ຈະຕ້ອງສະຫນອງ ແລະ ຄຸ້ມຄອງການດູແລສຸຂະພາບທີ່ຈໍາເປັນ.**

## ການດູແລທີ່ໄດ້ຮັບຄຸ້ມຄອງໂດຍມະໂຍບາຍ Medi-Cal ສໍາລັບເດັກນ້ອຍ ແລະ ໄວລຸ້ນ:

- ການບໍລິການດ້ານສຸຂະພາບທາງດ້ານກາຍຍະພາບ, ລວມທັງການດູແລປະຖົມພະຍາບານເບື້ອງຕົ້ນ ແລະ ການໄປພົບທ່ານໝໍຜູ້ຊ່ຽວຊານ
- ການບໍລິການສຸຂະພາບຈິດ ແລະ ສິ່ງເສບຕິດ ຫຼື ການຕິດເຫຼົ້າ, ລວມທັງການປິ່ນປົວ
- ບໍລິການ ກວດເຊັກ ແລະ ຕິດຕາມສຸຂະພາບແຂ້ວ
- ບໍລິການດ້ານສາຍຕາ, ລວມທັງແວ່ນຕາ
- ບໍລິການໄດ້ຍິນສຽງ
- ກວດເຊັກ ແລະ ໃຫ້ການປິ່ນປົວ COVID-19
- ອຸປະກອນການແພດ ແລະ ການສະໜອງອຸປະກອນທາງການແພດ, ເຊັ່ນ: ຕັ່ງເລື່ອນ, ລວມທັງອຸປະກອນການແພດທີ່ໃຊ້ເປັນໄລຍະ
- ການນໍາໃຊ້ຢາປົວພະຍາດ
- ການກວດໃນຫ້ອງທົດລອງ, ລວມທັງການກວດເລືອດເພື່ອກວດລະດັບສານສານຕົກຄ້າງ ແລະ ຕິດຕາມດູແລທີ່ຈໍາເປັນ
- ການປິ່ນປົວທາງດ້ານກາຍຍະພາບ, ອາຊີບ, ແລະ ການປາກເວົ້າ
- ການບໍລິການດ້ານສຸຂະພາບຢູ່ທີ່ບ້ານ, ລວມທັງການດູແລດ້ານພະຍາບານ
- ການປິ່ນປົວໃນໂຮງຫມໍ ແລະ ສະຖານທີ່ປິ້ນປົວຕ່າງໆ
- ການບໍລິການອື່ນໆທີ່ຈໍາເປັນ, ທ່ານທາງຜູ້ໃຫ້ບໍລິການ ຈະພິຈາລະນາໃຫ້

